ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----===000===-----

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 38 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 20 OCT 2014

**ລາຍງານການເຄື່ອນໄຫວປະຈຳອາທິດ**

**29/09-03/10/2014/2014 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ**

**ຂອງທະນາຄານແຫ່ງ ສປປ ລາວ**

## I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາພາຍໃນ

### 1.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ສຳລັບອັດຕາ ທທກ ແລະ ອ່ອນຄ່າລົງ 0,05% ສຳລັບອັດຕາຕະຫຼາດ. ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,30% ສຳລັບອັດຕາ ທທກ ແລະ ແຂງຄ່າຂຶ້ນ 0,34% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 17-23/09/2014 | | | ອາທິດນີ້ 24-30/09/2014 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | |
| ໂດລາ | 8.028,32 | 8.059,80 | 8.044,42 | 8.034,44 | 8.064,21 | 8.047,68 | -0,08% | -0,05% | -0,04% |
| ບາດ | 249,99 | 251,10 | 250,69 | 249,20 | 250,41 | 249,95 | 0,32% | 0,28% | 0,30% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.033,80 | 8.073,83 | 8.053,82 | 8.037,33 | 8.077,60 | 8.057,47 | -0,04% | -0,05% | -0,05% |
| ບາດ | 251,61 | 252,91 | 252,26 | 250,80 | 252,00 | 251,40 | 0,32% | 0,36% | 0,34% |
| ຜິດດ່ຽງອັດຕາ ທທກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ. | | | | | | | | | |
| ໂດລາ | 0,07% | 0,17% | 0,12% | 0,04% | 0,17% | 0,12% | | | |
| ບາດ | 0,65% | 0,72% | 0,63% | 0,64% | 0,64% | 0,58% | | | |

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທທກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

### 1.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ ເພີ່ມຂຶ້ນ 7,75% ທຽບໃສ່ວັນທີ 26/09/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 78,65%.
- ປະລິມານເງິນ $M_2$ (ຕົວເລກເບື້ອງຕົ້ນ) ເພີ່ມຂຶ້ນ 1,73% ເມື່ອທຽບໃສ່ວັນທີ 26/09/2014, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,67%.

### 1.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດນີ້ (ວັນທີ 29/9-03/10/2014) ເຫັນວ່າ ທທກ ຊື້ໂດລາສຸດທິ 18,01 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 52,06 ລ້ານໂດລາ ແລະ ຂາຍໂດລາໄດ້ 34,05 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 479,30 ລ້ານບາດ (ໃນນີ້ ຊື້ບາດໄດ້ 290,88 ລ້ານບາດ ແລະ ຂາຍບາດໄດ້ 770,18 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາ ເພີ່ມຂຶ້ນ 49,80% ແລະ ເພີ່ມຂຶ້ນ 6,20% ສຳລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍ ເງິນໂດລາມີ ຈຳນວນ 20,45 ລ້ານໂດລາ ແລະ ເງິນບາດມີ ຈຳນວນ 138,14 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຊື້ໂດລາສຸດທິ ຈຳນວນ 1,50 ລ້ານໂດລາ ແລະ ຂາຍບາດສຸດທິ ຈຳນວນ 147,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 231,43 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 1,16 ລ້ານບາດ.

**ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ**

(ຫົວໜ່ວຍ: ລ້ານ)

| | ອາທິດຜ່ານມາ 16-22/09/2014 | | ອາທິດນີ້ 23-29/09/2014 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 16,81 | 130,06 | 20,95 | 116,16 | 24,58% | -10,69% |
| - ທ/ຄທຸລະກິດອື່ນໆ | 21,29 | 146,41 | 31,12 | 174,72 | 46,12% | 19,34% |
| ລວມຊື້: | 38,11 | 276,47 | 52,06 | 290,88 | 36,62% | 5,21% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 9,35 | 227,99 | 15,74 | 220,26 | 68,35% | -3,39% |
| - ທ/ຄທຸລະກິດອື່ນໆ | 10,03 | 494,71 | 18,31 | 549,92 | 82,56% | 11,16% |
| ລວມຂາຍ: | 19,38 | 722,69 | 34,05 | 770,18 | 75,70% | 6,57% |
| ຊື້-ຂາຍສຸດທິ ທທກ | 18,73 | -446,22 | 18,01 | -479,30 | -3,82% | 7,41% |
| ຜົດດ່ຽງ ຊື້-ຂາຍ | 49,15 | -161,40 | 34,60 | -164,77 | -1454,74% | -337,19% |
| ມູນຄ່າການຊື້-ຂາຍ | 57,49 | 999,16 | 86,11 | 1,061,06 | 49,80% | 6,20% |
| 3. ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 11,46 | 0,00 | 1,50 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 1,05 | 409,00 | 0,00 | 147,50 | | |
| ຊື້-ຂາຍສຸດທິ ທຫລ | 10,41 | -409,00 | 1,50 | -147,50 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | 4,87 | 75,58 | 20,45 | 138,14 | | |

| 5. ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | |
|---|---|---|---|---|
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 10,41 | 0,07 | 231,48 | 1,16 |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,05 | 18,00 | 0,05 | 0,00 |
| **ຊື້-ຂາຍສຸດທິ ທຫລ** | 10,37 | -17,93 | 231,43 | 1,16 |

### 1.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ປະຈຳເດືອນ 10/2014 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 3,19% ເພີ່ມຂຶ້ນ 0,14% ຈາກ 3,05% ໃນເດືອນ 9/2014.

### 1.5 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 1.105 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 19,59% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 1.440,02 ຕື້ກີບ ເພີ່ມຂຶ້ນ 228,92% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) (26/09-02/10/2014) ມີຈຳນວນ 1.013 ຄັ້ງ ໂດຍມີມູນຄ່າ 364,5 ຕື້ກີບ ເພີ່ມຂຶ້ນ 83% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 367 ຄັ້ງ.

### 1.6 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.414,17 ຈຸດ ຫຼຸດລົງ 0,27% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 196.158 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,40 ຕື້ກີບ ເພີ່ມຂຶ້ນ 116,17% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 81,77% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.794 ກີບ/ຮຸ້ນ ຫຼຸດລົງ 110 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 75.242 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 586,40 ລ້ານກີບ ເພີ່ມຂຶ້ນ 115,25% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 79,83% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,37%[2].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.799 ກີບ/ຮຸ້ນ ຫຼຸດລົງ 223 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 120.916 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 822,12 ລ້ານກີບ ເພີ່ມຂຶ້ນ 117,77% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 83,06% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,22%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ ຊຶ່ງໃນອາທິດນີ້ແມ່ນບໍ່ມີການຈັບຄູ່ຊື້-ຂາຍຂອງຮຸ້ນດັ່ງກ່າວ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%[4].

❖ **ໝາຍເຫດ: ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວປະຈຳວັນທີ 22-26/10/2014.**

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.418,05 ຈຸດ ຫຼຸດລົງ 1,07% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 88.428 ຮຸ້ນ ແລະ ມີມູນຄ່າການ ຊື້-ຂາຍ 651,58 ລ້ານກີບ ຫຼຸດລົງ 0,34% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 38,41% ຂອງມູນຄ່າການຊື້-ຂາຍທັງໝົດ.

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີການົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.903 ກີບ/ຮຸ້ນ ເພີ່ມຂຶ້ນ 87 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 34.470 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 272,43 ລ້ານກີບເພີ່ມຂຶ້ນ 49,52% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 34,89% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນຢູ່ທີ່ 9,36%[5].

ຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 7.022 ກີບ/ຮຸ້ນ ຫຼຸດລົງ 28 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 53.758 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 377,51 ລ້ານກີບ ຫຼຸດລົງ -19,67% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 45,61% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,22%[6].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,64 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 2,71%[7].

2. **ວຽກງານອື່ນໆ ທີ່ພົ້ນເດັ່ນ.**

- ສຳເລັດການເຂົ້າຮ່ວມກອງປະຊຸມ: ❶ ກອງປະຊຸມ ເພື່ອນຳສະເໜີຫຼັກການຂອງທຸລະກິດໃຫ້ເຊົ່າສິນເຊື່ອ ເຊິ່ງຈະນຳສະເໜີເນື້ອໃນ ໂດຍອົງການການເງິນສາກົນ (IFC), ❷ ກອງປະຊຸມໃນຫົວຂໍ້ "Financial Investigation" ທີ່ປະເທດໄທ,
- ສຳເລັດການເຂົ້າຮ່ວມ ການຝຶກອົບຮົມພາຍໃຕ້ໂຄງການເຊື່ອມໂຍງອາຊຽນ (IAI) ໃນຫົວຂໍ້ "Dispute Resolution";
- ສຳເລັດການເຮັດວຽກຮ່ວມກັບຊ່ຽວຊານປະຈຳອົງການ UNODC/WB, ປະຈຳຮ່າໂນ້ຍ, ສສ. ຫວຽດນາມ ກ່ຽວກັບວຽກງານ AML/CFT;
- ສຳເລັດການຕິດຕາມກວດກາບົດສະຫຼຸບລາຍຈ່າຍບໍລິຫານ ປະຈຳເດືອນ 02-06/2014.

III. **ແຜນວຽກຈຸດສຸມອາທິດຕໍ່ໄປ:**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ຄົ້ນຄວ້າປັບປຸງອັດຕາດອກເບ້ຍເງິນຝາກປະຈຳຂອງ ທຫລ ສະກຸນເງິນບາດ ແລະ ໂດລາ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າ ຮ່າງຍຸດທະສາດການພັດທະນາຂີດຄວາມສາມາດ ເພື່ອລາຍງານຄະນະຜູ້ວ່າການ ທຫລ, ❷ ຄົ້ນຄວ້າ ກ່ຽວກັບການເຂົ້າເປັນສະມາຊິກ AFI (ມູນລະນິທິ ເພື່ອການເຂົ້າເຖິງແຫຼ່ງທຶນທີ່ທົ່ວເຖິງ), ❸ ຄົ້ນຄວ້າແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄວ້ານິຕິກຳລຸ່ມກົດໝາຍ ເພື່ອນຳສະເໜີຂັ້ນເທິງ, ❹ ຄົ້ນຄວ້າ ກ່ຽວກັບການສ້າງລະບົບຕ້ານການຟອກເງິນທີ່ທັນສະໄໝ ໂດຍສະເພາະແມ່ນລະບົບ IT;
- ສືບຕໍ່ພິມທະນາບັດ ງວດ 5 ປະເພດໃບ 2.000 ກີບໃໝ່ ລຸ້ນປີ 2011 ຈຳນວນ 60 ລ້ານໃບ.

❖ **ໝາຍເຫດ:** **ໄລຍະອາທິດນີ້ແມ່ນບໍ່ສາມາດລາຍງານເນື້ອໃນຄົບຖ້ວນໄດ້ ເນື່ອງຈາກກົມນະໂຍບາຍເງິນຕາມີການປັບປຸງຮູບແບບການລາຍງານໃໝ່.**

**ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.**

ສຸກັນ ຈັນທະວົງ

[5]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[6]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[7]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດຂອງ ແມ່ນບໍ່ມີກຳນົດ.